ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຖະແຫຼງຂ່າວ,ວັດທະນະທຳ ແລະ ທ່ອງທ່ຽວ

ເລກທີ 286 /ຖວທ

ລົງວັນທີ 9/5/2017

# ຄຳສັ່ງແນະນຳ

## ຂອງລັດຖະມົນຕີກະຊວງ ຖວທ

## ວ່າດ້ວຍການຫ້າມບໍ່ໃຫ້ອອກໃບອະນຸຍາດສ້າງງຕັ້ງສູນບໍລິການຕູ້ເກມໃນຂອບເຂດທົ່ວປະເທດ

ເຖິງ: ບັນດາກົມ, ກອງ ອ້ອມຂ້າງກະຊວງ, ບັນດາພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ ໃນທົ່ວປະເທດ.

ເລື່ອງ: ຫ້າມບໍ່ໃຫ້ອອກໃບອະນຸຍາດສ້າງຕັ້ງສູນ ຫຼື ສະໂມສອນບໍລິການຕູ້ເກມເພື່ອການພະນັນ ໃນຂອບເຂດທົ່ວປະເທດ.

- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 95/ນຍ, ລົງວັນທີ 09 ມີນາ 2017 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;
- ອີງຕາມການຊີ້ນຳ ແລະ ຕົກລົງໃນກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ຄັ້ງວັນທີ 10 ເມສາ 2017;
- ອີງຕາມແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ 584/ຫສນຍ.ກລຂ, ລົງວັນທີ 12 ເມສາ 2017. ເລື່ອງການອະນຸມັດໃຫ້ສ້າງຕັ້ງສູນບໍລິການຕູ້ເກມ(Slot Machine) ໃນຂອບເຂດທົ່ວປະເທດ.

### ລັດຖະມົນຕີກະຊວງ ຖ.ວ.ທ ອອກຄຳສັ່ງແນະນຳ ດັ່ງນີ້:

1. ຫ້າມອອກໃບອະນຸຍາດສ້າງຕັ້ງສູນບໍລິການເກມໄຟຟ້າ ເພື່ອການພະນັນທຸກປະເພດ, ແຂວງໃດອະນຸຍາດກ່ອນແລ້ວ ກໍໃຫ້ອອກແຈ້ງການລົບລ້າງຢ່າງເປັນທາງການ.
2. ບຸກຄົນ ແລະ ນິຕິບຸກຄົນໃດ ມີຈຸດປະສົງຢາກສ້າງຕັ້ງສູນບໍລິການຕູ້ເກມໄຟຟ້າ ເພື່ອການພະນັນ ຕ້ອງຂໍອະນຸຍາດ ຈາກຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເທົ່ານັ້ນ.
3. ບັນດາກົມ,ກອງອ້ອມຂ້າງກະຊວງ,ພະແນກຖວທແຂວງ,ນະຄອນຫຼວງ ຈົ່ງຮັບຊາບແລະປະຕິບັດຕາມຢ່າງເຂັ້ມງວດ.
4. ຄຳສັ່ງແນະນຳສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ, ເອກະສານອື່ນຜ່ານມາຂອງກະຊວງຖະແຫຼງ ຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ກ່ຽວກັບເລື່ອງນີ້ລ້ວນແຕ່ຖືກລົບລ້າງ.

ລັດຖະມົນຕີ

ສຈ.ດຣ ບໍ່ແສງຄຳ ວົງດາລາ